ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຜູ້ວ່າການ ທຫລ ຊີ້ແຈງສະພາບອັດຕາແລກປ່ຽນໃນປະຈຸບັນ ຕໍ່ກອງປະຊຸມ ວິສາມັນສະພາແຫ່ງຊາດ



ໃນວັນທີ 6 ສິງຫາ ຜ່ານມາ ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປລາວ (ທຫລ) ໄດ້ຊີ້ແຈງສະພາບການເໜັງຕີງຂອງອັດຕາແລກປ່ຽນໃນປະຈຸບັນຕໍ່ສະມາຊິກສະພາແຫ່ງຊາດ ໃນວາລະດຳເນີນກອງປະຊຸມສະໄໝວິສາມັນ ຄັ້ງທີ 1 ຂອງສະມາຊິກສະພາແຫ່ງຊາດ ຊຸດທີ IX ໂດຍມີຫຼາຍປັດໃຈທີ່ເຮັດໃຫ້ອັດຕາແລກປ່ຽນເງິນກີບທຽບໃສ່ເງິນໂດລາ ແລະ ເງິນບາດ ມີການແຕກໂຕນກັນໃນໄລຍະ 2 ເດືອນຜ່ານມາ ເຊິ່ງເຫັນວ່າເປັນສິ່ງທ້າທາຍໃຫ້ແກ່ ທຫລ ໃນການຄຸ້ມຄອງ ແລະ ກຳນົດທິດທາງໃນການວາງນະໂຍບາຍໃນການຄຸ້ມຄອງເງິນຕາຕ່າງປະເທດ.

ທ່ານໄດ້ກ່າວວ່າ: ບັນຫາອັດຕາແລກປ່ຽນແມ່ນເປັນສິ່ງທ້າທາຍໜຶ່ງຕໍ່ເສດຖະກິດຂອງພວກເຮົາ ໂດຍສະເພາະໃນໄລຍະເດືອນ ມິຖຸນາ ແລະ ເດືອນກໍລະກົດທີ່ຜ່ານມາ ເງິນກີບໄດ້ອ່ອນຄ່າລົງຫຼາຍ ທຽບກັບເງິນໂດລາ ແລະ ເງິນບາດ ພ້ອມກັບອັດຕາແລກປ່ຽນຂອງທະນາຄານ ແລະ ຕະຫຼາດນອກລະບົບ ໂດຍສະເພາະແມ່ນເງິນກີບທຽບໃສ່ເງິນໂດລາ ຊຶ່ງໄດ້ກວ້າງອອກສູງສຸດເຖິງ 22,1% ໃນເດືອນ ກໍລະກົດ ຈາກນັ້ນຄ່ອຍແຄບລົງມາໃນລະດັບ 15,6% ໃນທ້າຍເດືອນ; ສະເລ່ຍ 7 ເດືອນ ຂອງປີ 2021 ມີສ່ວນຕ່າງລະຫວ່າງອັດຕາທະນາຄານ ແລະ ອັດຕາຕະຫຼາດນອກລະບົບ 9,98 % ສຳລັບກີບ/ໂດລາ ແລະ 0,52% ສຳລັບກີບ/ບາດ ສາເຫດຕົ້ນຕໍທີ່ພາໃຫ້ເກີດສະພາບດັ່ງກ່າວແມ່ນຍ້ອນ:

- ການແຂງຄ່າຂອງເງິນໂດລາ ທຽບກັບສະກຸນເງິນອື່ນ ແລະ ການແຂງຄ່າຂອງເງິນບາດທຽບເງິນໂດລາໃນຕະຫຼາດສາກົນ ໂດຍລວມເຖິງແມ່ນວ່າໃນໄລຍະທ້າຍເດືອນກໍລະກົດ ຫາຕົ້ນເດືອນສິງຫາ ຄ່າເງິນບາດໃນສາກົນໄດ້ອ່ອນຄ່າລົງກໍ່ຕາມ.
- ຄວາມຕ້ອງການເງິນຕາຕ່າງປະເທດພາຍໃນມີຫຼາຍກວ່າຄວາມສາມາດໃນການສະໜອງ ເນື່ອງຈາກສະພາບການຂາດດຸນການຄ້າ, ການບໍລິການ, ພາລະໃນການຊໍາລະດອກເບ້ຍເງິນກູ້ຢືມກັບຕ່າງປະເທດທີ່ຍັງມີຫຼາຍ ແລະ ຕໍ່ເນື່ອງຍາວນານ ໃນຂະນະທີ່ລາຍຮັບຂອງປະເທດຫຼຸດລົງຫຼາຍ ຍ້ອນຜົນກະທົບຈາກໂຄວິດ-19.
- ຄວາມຈໍາເປັນໃນການສະໜອງເງິນຕາຕ່າງປະເທດໃຫ້ແກ່ການນໍາເຂົ້າສິນຄ້າບູລິມະສິດຍັງຢູ່ໃນລະດັບສູງ ແຕ່ສະພາບຄ່ອງດ້ານເງິນຕາຕ່າງປະເທດໃນທົ່ວລະບົບເສດຖະກິດຍັງຝືດເຄືອງ, ຄວາມສາມາດໃນການດູດຊຶມຕະຫຼາດເງິນຕາຕ່າງປະເທດຂອງຂະແໜງການທະນາຄານກໍ່ຫຼຸດລົງຫຼາຍ ບໍ່ພຽງພໍກັບຄວາມຕ້ອງການຂອງສັງຄົມທີ່ຍັງມີສູງ.
- ການຄຸ້ມຄອງເງິນຕາຕ່າງປະເທດຂອງທຸກພາກສ່ວນຍັງບໍ່ທັນກົມກຽວ ແລະ ຮັດກຸມເທົ່າທີ່ຄວນ ເຮັດໃຫ້ຍັງມີການເຄື່ອນໄຫວທຸລະກໍາທີ່ຕິດພັນກັບເງິນຕາຕ່າງປະເທດ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍບໍ່ໜ້ອຍ. ໃນນີ້, ໃນສະພາບທີ່ຄວາມຕ້ອງການເງິນຕາຕ່າງປະເທດຂອງສັງຄົມມີຫຼາຍກວ່າຄວາມສາມາດໃນການສະໜອງຂອງລະບົບ ໄດ້ມີຮ້ານແລກປ່ຽນເງິນຕາຈໍານວນໜຶ່ງທີ່ບໍ່ປະຕິບັດຕາມລະບຽບການ ໂດຍມີການກໍານົດອັດຕາແລກປ່ຽນບໍ່ສອດຄ່ອງກັບຂອບອັດຕາແລກປ່ຽນທີ່ທາງການກໍານົດ.



ຕໍ່ສະພາບການດັ່ງກ່າວ ເພື່ອປັບປຸງກົນໄກ ການຄຸ້ມຄອງທຸລະກິດແລກປ່ຽນເງິນຕາໃຫ້ຮັດກຸມຫຼາຍຂຶ້ນ ໃນໄລຍະກາງເດືອນ ມິຖຸນາ 2021 ທຫລ ໄດ້ອອກແຈ້ງການໂຈະການຮັບເອກະສານຄໍາຮ້ອງ ແລະ ການອອກໜັງສືອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາໃນຂອບເຂດທົ່ວປະເທດ, ໃນເດືອນກໍລະກົດຫາເດືອນສິງຫາ 2021 ໄດ້ແຈ້ງການຫັນຮ້ານແລກປ່ຽນເງິນຕາໄປເປັນຮ້ານຕົວແທນຂອງທະນາຄານທຸລະກິດ ໃນການດໍາເນີນທຸລະກິດແລກປ່ຽນເງິນຕາ ແລະ ອອກຄໍາແນະນໍາການຈັດຕັ້ງປະຕິບັດແຈ້ງການດັ່ງກ່າວ ພ້ອມທັງມີການຈັດຕັ້ງເຜີຍແຜ່ ບັນດາເອກະສານເຫຼົ່ານັ້ນ ໃຫ້ບັນດາ

ທະນາຄານທຸລະກິດກ່ຽວຂ້ອງ, ຮ້ານແລກປ່ຽນເງິນຕາ ແລະ ສາຂາທະນາຄານແຫ່ງ ສປປລາວ ປະຈຳທ້ອງຖິ່ນ ເພື່ອຮັບປະກັນປະສິດທິຜົນຂອງນິຕິກຳທີ່ວ່າງອອກ ແລະ ຈະຕິດຕາມກົນໄກການຄຸ້ມຄອງດັ່ງກ່າວຢ່າງໃກ້ຊິດ.

ພ້ອມດຽວກັນນີ້, ເພື່ອໃຫ້ບັນລຸຄາດໝາຍ ດ້ານສ່ວນຕ່າງລະຫວ່າງອັດຕາທະນາຄານ ແລະ ຕະຫຼາດໃຫ້ແຄບເຂົ້າບໍ່ເກີນ 2% ພາຍໃນ ປີ 2023 ເຊິ່ງ ທຫລ ກໍ່ຄືລັດຖະບານກໍ່ມີຄວາມມຸ່ງຫວັງທີ່ຢາກບັນລຸໃຫ້ໄດ້ໄວເທົ່າທີ່ໄວໄດ້ ແຕ່ເຖິງແນວໃດກໍ່ຕາມການສ້າງຄວາມເຂັ້ມແຂງໃຫ້ພື້ນຖານເສດຖະກິດພາຍໃນ ກໍ່ຄືການສ້າງຄວາມເຂັ້ມແຂງໃຫ້ຖານະການຊຳລະກັບຕ່າງປະເທດແມ່ນຕ້ອງໃຊ້ເວລາໃນລະດັບໃດໜຶ່ງ; ໃນເງື່ອນໄຂທີ່ພວກເຮົາຢູ່ໃນຖານະຂາດດຸນກັບຕ່າງປະເທດມາຍາວນານ ແລະ ຕໍ່ເນື່ອງ. ໃນນີ້, ຈະເລັ່ງປັບປຸງກົນໄກການຄຸ້ມຄອງອັດຕາແລກປ່ຽນ ໃຫ້ສ່ອງແສງສະພາບເງື່ອນໄຂຂອງປະເທດໃຫ້ຫຼາຍຂຶ້ນ ເພື່ອຊີ້ນຳຄຸ້ມຄອງຕະຫຼາດໃຫ້ໄດ້ດີກວ່າເກົ່າ ພ້ອມທັງຮັບປະກັນໄດ້ສະເຖຍລະພາບທາງດ້ານລາຄາ ສືບຕໍ່ປັບປຸງກົນໄກການຄຸ້ມຄອງທຸລະກິດແລກປ່ຽນເງິນຕາ ເພື່ອເຮັດໃຫ້ເງິນຕາຕ່າງປະເທດ ມີການຈໍລະຈອນເຂົ້າສູ່ລະບົບທະນາຄານ ໄດ້ຢ່າງໂລ່ງລຽນຂຶ້ນ; ປະສານສົມທົບ ຢ່າງກົມກຽວກັບທຸກພາກສ່ວນກ່ຽວຂ້ອງ ເພື່ອປະກອບສ່ວນສ້າງຄວາມເຂັ້ມແຂງ ໃຫ້ຖານະເງິນຕາຕ່າງປະເທດຂອງ ສປປລາວ, ຫຼຸດຜ່ອນການຂາດດຸນກັບຕ່າງປະເທດ ໂດຍສະເພາະການສົ່ງເສີມການຜະລິດ ເພື່ອທົດແທນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກໃຫ້ແກ່ຫົວໜ່ວຍທຸລະກິດ ທີ່ເປັນກຳມະສິດຂອງຄົນລາວ ທີ່ຈະສາມາດຊ່ວຍໃນການແກ້ໄຂບັນຫາດ້ານຄ່າເງິນໄດ້ຢ່າງຍືນຍົງ.

*# ພາບ-ຂ່າວ: ສົມອົກ*

*ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນລາວ*